## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
## ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 04 ປປທ

ລົງວັນທີ 18 ພະຈິກ 2009

# ລັດຖະບັນຍັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

### ວ່າດ້ວຍການເກັບອາກອນຊົມໃຊ້ເພີ່ມສຳລັບຢາສູບ ທີ່ຜະລິດຢູ່ພາຍໃນປະເທດ

----------------

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ VI, ມາດຕາ 67 ຂໍ້ 2;
- ອີງຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 189/ຄປຈ, ລົງວັນທີ 03 ພະຈິກ 2009 ວ່າດ້ວຍການຮັບຮອງເອົາການປັບປຸງອັດຕາອາກອນຊົມໃຊ້ເພີ່ມສຳລັບຢາສູບ ທີ່ຜະລິດຢູ່ພາຍໃນປະເທດເປັນການຊົ່ວຄາວ.
- ອີງຕາມໜັງສືສະເໜີຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 063/ຄປຈ, ລົງວັນທີ 03 ພະຈິກ 2009.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະບັນຍັດ :**

**ມາດຕາ 1 :** ເຫັນດີອະນຸມັດໃຫ້ເກັບອາກອນຊົມໃຊ້ເພີ່ມສຳລັບຢາສູບ ທີ່ຜະລິດຢູ່ພາຍໃນປະເທດ ໃນອັດຕາ 100 ກີບ ຕໍ່ຊອງ ( ໜຶ່ງຮ້ອຍກີບ ຕໍ່ຊອງ ) ເປັນການຊົ່ວຄາວ.

**ມາດຕາ 2 :** ມອບໃຫ້ລັດຖະບານຄົ້ນຄວ້າເກັບອາກອນຊົມໃຊ້ເພີ່ມສຳລັບຢາສູບທີ່ຜະລິດ ຢູ່ພາຍໃນປະເທດ ຂຶ້ນເປັນແຕ່ລະປີຕາມຄວາມເໝາະສົມຈົນກວ່າເຖິງອັດຕາ ທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 3 :** ລັດຖະບັນຍັດສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ຂໍ້ກຳນົດ ຫຼື ແຈ້ງການໃດໆທີ່ຂັດຫລືບໍ່ສອດຄ່ອງກັບລັດຖະບັນຍັດສະບັບນີ້ ແມ່ນລ້ວນແຕ່ຖືກລົບລ້າງ.

**ປະທານປະເທດແຫ່ງ ສປປ ລາວ.**

ຈູມມາລີ ໄຊຍະສອນ